> ສຳລັບຄູຊັ້ນປະຖົມສຶກສາ
> ສຳລັບຜູ້ເຮັດວຽກສຶກສານິເທດ
> ສຳລັບທຸກທ່ານທີ່ໃຫ້ການຊ່ວຍເຫຼືອ ດ້ານການສຶກສາ

# ແຜ່ນພັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

## ລາຍການແຫຼ່ງຂໍ້ມູນຮຽນຮູ້ຕ່າງໆ



# ການຮຽນ ແລະ ຜົນການຮຽນຂອງນັກຮຽນ ແມ່ນຫົວໃຈຂອງວຽກງານການພັດທະນາ ວິຊາຊີບຄູແບບຕໍ່ເນື່ອງ

ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເປັນອົງປະກອບຫຼັກໃນການເສີມຂະຫຍາຍທັກສະ ແລະ ປະສິດທິຜົນດ້ານການສອນຂອງຄູ ໃນຕະຫຼອດອາຊີບຂອງເຂົາເຈົ້າທີ່ກ່ຽວຂ້ອງກັບປະສົບການດ້ານການຮຽນຮູ້ຈາກຫຼາກຫຼາຍຮູບແບບ ເຊັ່ນ: ການເຂົ້າຮ່ວມກອງປະຊຸມ, ຫຼັກສູດການຮຽນ, ການຮຽນຮູ້ຈາກເພື່ອນ ແລະ ການສຶກສາດ້ວຍຕົນເອງ ໂດຍທັງໝົດນີ້ ແມ່ນແນໃສ່ການເສີມສ້າງເຕັກນິກການສອນ ແລະ ການປະຕິບັດວຽກງານດ້ານການສຶກສາ. ການພັດທະນາວິຊາຊີບຄູແບບຕໍ່ເນື່ອງຖືກອອກແບບມາເພື່ອສ້າງຄວາມເຂັ້ມແຂງແກ່ຄູ ໃຫ້ມີວິທີການສອນ ແລະ ຄວາມເຂົ້າໃຈໃນແບບທີ່ສ້າງສັນ ເພື່ອເຮັດໃຫ້ການສອນມີປະສິດທິພາບ ແລະ ປະສົບຜົນສໍາເລັດຫຼາຍຂຶ້ນ.

ລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໄດ້ຖືກສ້າງຂຶ້ນ ເພື່ອສະໜອງການສະໜັບສະໜູນແບບຮອບດ້ານໃນທຸກລະດັບ ລວມມີລະດັບຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນໂຮງຮຽນ. ລະບົບດັ່ງກ່າວນີ້ຈະສົ່ງເສີມການຮ່ວມມືກັນ ລະຫວ່າງຄູ, ຜູ້ອໍານວຍການ ແລະ ຜູ້ຊ່ວຍເຫຼືອດ້ານການສຶກສາ, ການສ້າງສະພາບແວດລ້ອມທີ່ສົ່ງເສີມການຂະຫຍາຍຕົວທາງດ້ານວິຊາຊີບ. ຄູໄດ້ຖືກຊຸກຍູ້ໃຫ້ມີສ່ວນຮ່ວມໃນການສະທ້ອນຄືນ ແລະ ການຮຽນຮູ້ຢ່າງຕໍ່ເນື່ອງ, ເຮັດໃຫ້ຄູສາມາດດັດປັບວິທີການສອນຂອງຕົນ ເພື່ອຕອບສະໜອງຄວາມຕ້ອງການຂອງນັກຮຽນໃຫ້ໄດ້ດີຂຶ້ນ.

ແຜ່ນພັບສະບັບນີ້ ໄດ້ສັງລວມລາຍການແຫຼ່ງຂໍ້ມູນຮຽນຮູ້ຕ່າງໆ ທີ່ນໍາໃຊ້ເຂົ້າໃນວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເຊິ່ງໄດ້ອອກແບບ ເພື່ອຊ່ວຍພັດທະນາວິຊາຊີບຂອງຜູ້ເຂົ້າຮ່ວມທຸກພາກສ່ວນ. ແຫຼ່ງຂໍ້ມູນຮຽນຮູ້ເຫຼົ່ານີ້ ສາມາດນໍາມາປະຕິບັດໄດ້ ແລະ ນໍາໃຊ້ໄດ້ງ່າຍ ເຊິ່ງຮັບປະກັນການເຊື່ອມໂຍງໃຫ້ເຂົ້າກັບການຈັດຕັ້ງປະຕິບັດວຽກງານດ້ານການສຶກສາ ໄດ້ຢ່າງງ່າຍດາຍ. ນອກຈາກນັ້ນ, ຍັງມີຄໍາແນະນໍາ ກ່ຽວກັບວິທີການເຂົ້າເຖິງ ແລະ ນໍາໃຊ້ແຫຼ່ງຂໍ້ມູນຮຽນຮູ້ເຫຼົ່ານີ້ຢ່າງມີປະສິດທິພາບ ເພື່ອເປັນການເສີມສ້າງຄວາມເຂັ້ມແຂງໃຫ້ຜູ້ມີສ່ວນຮ່ວມ ໃນການເພີ່ມປະສິດທິພາບການສອນ ແລະ ການສະໜັບສະໜູນຜົນສໍາເລັດຂອງນັກຮຽນ.



# ມີແຫຼ່ງຂໍ້ມູນຮຽນຮູ້ຫຍັງແດ່ ສຳລັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ?



ຊຸດອຸປະກອນຊ່ວຍເຫຼືອຄູ



ວິດີໂອສຳລັບການ
ພັດທະນາຄູ

ສາລະຄະດີ
ຄູຕົວແບບ





ວິດີໂອປູກຈິດສຳນຶກ



ຊຸດຟາຍສຽງ



ປື້ມຄູ່ມືຄູ



ຮ່າງບົດສອນ ແລະ ຄຳແນະນຳ ສຳລັບ
ການກະກຽມ ເພື່ອແຕ່ງບົດສອນ



ປື້ມຄູ່ມື ແລະ ແຫຼ່ງຂໍ້ມູນຮຽນຮູ້
ແລະ ສື່ການຮຽນການສອນຕ່າງໆ
ສຳລັບການຝຶກອົບຮົມ



ເຄື່ອງມືໃຫ້ການຊ່ວຍເຫຼືອ
ໃນພາກຮຽນ

**ທຸກໆແຫຼ່ງຂໍ້ມູນຮຽນຮູ້ຕ່າງໆ ທ່ານສາມາດເຂົ້າເຖິງໄດ້ແບບອອນໄລ ຜ່ານແພັຣດຟອມຫຼາຍຮູບແບບ ໂດຍການສະແກນລະຫັດຄິວອາ (QR) ຢູ່ໜ້າສຸດທ້າຍ.**

# ຊຸດອຸປະກອນຊ່ວຍເຫຼືອຄູ



ຊຸດອຸປະກອນຊ່ວຍເຫຼືອຄູ ເປັນແຫຼ່ງຂໍ້ມູນຮຽນຮູ້ແບບຮອບດ້ານທີ່ສ້າງຂຶ້ນ ເພື່ອເສີມຂະຫຍາຍການພັດທະນາວິຊາຊີບໃຫ້ແກ່ນັກວິຊາການດ້ານການສຶກສາ ເຊິ່ງປະກອບມີຄູ, ຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດ ແລະ ວິຊາການຈາກວິທະຍາໄລຄູ. ໃນເບື້ອງຕົ້ນແມ່ນໄດ້ອອກແບບ ສຳລັບຄູຝຶກຂັ້ນແຂວງເພື່ອຊ່ວຍເຫຼືອຄູເມື່ອລົງຢ້ຽມຢາມໂຮງຮຽນ ຫຼື ແບບທາງໄກ; ໃນປະຈຸບັນນີ້, ຊຸດອຸປະກອນຊ່ວຍເຫຼືອຄູສະບັບປັບປຸງໃໝ່ ແມ່ນສາມາດນຳໃຊ້ສຳລັບຫຼາກຫຼາຍພາກສ່ວນ ທີ່ມີເປົ້າໝາຍໃນການປັບປຸງຮູບແບບການສອນ ແລະ ຜົນການຮຽນຮູ້ຂອງນັກຮຽນ.



# ພາບລວມຂອງຊຸດອຸປະກອນຊ່ວຍເຫຼືອຄູ



ຊຸດອຸປະກອນຊ່ວຍເຫຼືອຄູ ປະກອບດ້ວຍ**ຫຼາກຫຼາຍໂມດູນທີ່ແຕກຕ່າງກັນ** ເຊິ່ງແຕ່ລະໂມດູນ ແມ່ນສຸມໃສ່ຂົງເຂດການສອນສະເພາະທີ່ແຕກຕ່າງກັນ. ໂມດູນເຫຼົ່ານີ້ ສະໜອງວິທີການທີ່ສາມາດປະຕິບັດໄດ້ ແລະ ສາມາດເຂົ້າເຖິງໄດ້ແບບງ່າຍດາຍ ສຳລັບຜູ້ມີສ່ວນຮ່ວມໃນດ້ານວຽກງານການສຶກສາທັງໝົດ. ຜູ້ຊົມໃຊ້ສາມາດເລືອກເອົາໂມດູນທີ່ເໝາະສົມກັບຄວາມຕ້ອງການດ້ານການຮຽນຮູ້ຂອງເຂົາເຈົ້າ ເຊິ່ງຈະມີຄຳແນະນຳ ແລະ ວິທີການ ທີ່ມີປະໂຫຍດເພື່ອເສີມຂະຫຍາຍຮູບແບບການສິດສອນຂອງເຂົາເຈົ້າ. ເນື້ອໃນແມ່ນສອດຄ່ອງກັບ **ມາດຕະຖານການສອນຊັ້ນປະຖົມສຶກສາ** ເພື່ອຮັບປະກັນວ່າ ສາມາດຕອບສະໜອງໄດ້ຕາມຄວາມຄາດຫວັງຕ່າງໆ ສຳລັບທັງນັກສຶກສາຄູ ແລະ ຄູປະຈຳການ.

ຄຸນລັກສະນະທີ່ສຳຄັນຂອງ ຊຸດອຸປະກອນຊ່ວຍເຫຼືອຄູ:

- **ໂຄງສ້າງໂມດູນ:** ແຕ່ລະໂມດູນກ່າວເຖິງຂົງເຂດການສອນທີ່ແຕກຕ່າງກັນ.
- **ວິທີການທີ່ສາມາດປະຕິບັດໄດ້:** ສະເໜີວິທີການສອນ ທີ່ສາມາດເອົາໄປຈັດຕັ້ງປະຕິບັດໄດ້ໃນທັນທີ.
- **ມີຄວາມສອດຄ່ອງກັບມາດຕະຖານການສອນຊັ້ນປະຖົມສຶກສາ:** ແຕ່ລະໂມດູນແມ່ນຕິດພັນກັບຕົວຊີ້ວັດສະເພາະຢູ່ໃນມາດຕະຖານການສອນຊັ້ນປະຖົມສຶກສາ ເຊິ່ງຈະຊ່ວຍໃຫ້ນັກວິຊາການດ້ານການສຶກສາ ມີຄວາມເຂົ້າໃຈກ່ຽວກັບຄວາມຕ້ອງການດ້ານວິຊາຊີບຂອງເຂົາເຈົ້າ.
- **ການເຊື່ອມໂຍງກັບວິດີໂອ:** ບັນດາໂມດູນຕ່າງໆ ມີລະຫັດ QR ທີ່ເຊື່ອມຕໍ່ກັບ ວິດີໂອສຳລັບການພັດທະນາຄູ ທີ່ສະແດງໃຫ້ເຫັນເຕັກນິກການສອນຕ່າງໆ.



# ພາກສ່ວນທີ່ກ່ຽວຂ້ອງ ສາມາດນຳໃຊ້ຊຸດອຸປະກອນຊ່ວຍເຫຼືອຄູແນວໃດ?



### ຄູ

- ຄູສາມາດນຳໃຊ້ໂມດູນໃນຊຸດອຸປະກອນຊ່ວຍເຫຼືອຄູ ເພື່ອສົ່ງເສີມທັກສະການສອນ ແລະ ຄວາມຮູ້ຂອງເຂົາເຈົ້າ ກ່ຽວກັບຂົງເຂດສະເພາະຕ່າງໆ. ແຕ່ລະໂມດູນສະໜອງວິທີການທີ່ມີປະສິດທິພາບທີ່ຄູສາມາດປະຕິບັດໄດ້ໂດຍກົງ ຢູ່ໃນຫ້ອງຮຽນຂອງເຂົາເຈົ້າ, ມີການສົ່ງເສີມການຮຽນທີ່ເນັ້ນໃສ່ການປະຕິບັດຕົວຈິງ ແລະ ເນັ້ນການມີສ່ວນຮ່ວມຂອງນັກຮຽນ. ຄູຖືກຊຸກຍູ້ ໃຫ້ມີການສະທ້ອນຄືນ ກ່ຽວກັບການສອນຂອງເຂົາເຈົ້າ ໂດຍໃຊ້ຄຳແນະນຳທີ່ມີຢູ່ໃນແຕ່ລະໂມດູນ.



### ຜູ້ອຳນວຍການໂຮງຮຽນ

- ຜູ້ອຳນວຍການໂຮງຮຽນ ສາມາດນຳໃຊ້ຊຸດອຸປະກອນຊ່ວຍເຫຼືອຄູ ເພື່ອສະໜັບສະໜູນການພັດທະນາວິຊາຊີບຂອງຄູຂອງເຂົາເຈົ້າ ດ້ວຍການອຳນວຍຄວາມສະດວກ ໃນການເຂົ້າເຖິງໂມດູນທີ່ກ່ຽວຂ້ອງ ແລະ ອຳນວຍຄວາມສະດວກໃຫ້ຜູ້ເຮັດວຽກສຶກສານິເທດ ເພື່ອຮັບປະກັນວ່າຄູໄດ້ຮັບການສະໜັບສະໜູນຕາມເປົ້າໝາຍ.
- ດ້ວຍການທຳຄວາມເຂົ້າໃຈ ກ່ຽວກັບເນື້ອໃນຂອງໂມດູນໃນຊຸດອຸປະກອນຊ່ວຍເຫຼືອຄູ, ຜູ້ອຳນວຍການໂຮງຮຽນ ສາມາດເຂົ້າໃຈ ແລະ ໃຫ້ການສະໜັບສະໜູນການດຳເນີນການສອນ ຢູ່ພາຍໃນໂຮງຮຽນຂອງເຂົາເຈົ້າໄດ້ ແລະ ໃຫ້ຄຳຄິດເຫັນທີ່ສ້າງສັນ ໂດຍອີງໃສ່ມາດຕະຖານຕ່າງໆທີ່ໄດ້ສ້າງຂຶ້ນ.



### ຜູ້ເຮັດວຽກສຶກສານິເທດ

- ຜູ້ເຮັດວຽກສຶກສານິເທດ (ລວມທັງທີມງານຄູຝຶກຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ) ສາມາດນຳໃຊ້ຊຸດອຸປະກອນຊ່ວຍເຫຼືອຄູ ເພື່ອໃຫ້ການສະໜັບສະໜູນແກ່ຄູ ເພື່ອຊ່ວຍໃຫ້ຄູເຂົ້າໃຈວ່າ ຈະຈັດຕັ້ງປະຕິບັດວິທີການຕ່າງໆ ທີ່ລະບຸໄວ້ຢູ່ໃນແຕ່ລະໂມດູນໄດ້ແນວໃດ.



### ວິທະຍາໄລຄູ

- ວິທະຍາໄລຄູ ສາມາດນຳໃຊ້ຊຸດອຸປະກອນຊ່ວຍເຫຼືອຄູ ເຂົ້າໃນການຊ່ວຍເຫຼືອນັກສຶກສາຄູຂອງເຂົາເຈົ້າ ເພື່ອຮັບປະກັນວ່າ ນັກວິຊາການດ້ານການສຶກສາໃນອະນາຄົດ ມີຄວາມພ້ອມທາງດ້ານວິທີການສອນທີ່ມີປະສິດທິພາບ ນັບຕັ້ງແຕ່ເລີ່ມຕົ້ນ.
- ວິຊາການຈາກວິທະຍາໄລຄູ ສາມາດຊຸກຍູ້ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃຫ້ແກ່ບັນດາຄູປະຈຳການໄດ້ ດ້ວຍການນຳໃຊ້ໂມດູນໃນຊຸດອຸປະກອນຊ່ວຍເຫຼືອຄູ ເພື່ອເປັນສ່ວນໜຶ່ງຂອງການສະໜັບສະໜູນຄູ.
- ນອກຈາກນີ້, ວິຊາການຈາກວິທະຍາໄລຄູ ຍັງສາມາດນຳໃຊ້ໂມດູນໃນຊຸດອຸປະກອນຊ່ວຍເຫຼືອຄູ ເພື່ອພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຂອງຕົນເອງໄດ້.

# ຮອດເດືອນກໍລະກົດ ປີ 2026 ມີໂມດູນໃດແດ່ ໃນຊຸດອຸປະກອນຊ່ວຍເຫຼືອຄູ?

**ໂມດູນ 1**
ການຄຸ້ມຄອງຫ້ອງຮຽນ

**ໂມດູນ 2**
ການຊ່ວຍເຫຼືອເດັກຊົນເຜົ່າ

**ໂມດູນ 3**
ການສອນຫ້ອງຄວບ

**ໂມດູນ 4**
ບັດຄຳ ແລະ ບັດຮູບພາບ

**ໂມດູນ 5**
ການວັດ ແລະ ປະເມີນຜົນ

**ໂມດູນ 6**
ການແຕ່ງບົດສອນ

**ໂມດູນ 7**
ການຈັດຕັ້ງ ແລະ ການ ດຳເນີນກິດຈະກຳເປັນຄູ່/ກຸ່ມ

**ໂມດູນ 8**
ເສີມສ້າງຄວາມໝັ້ນໃຈໃນ ການສອນພາສາອັງກິດ

**ໂມດູນ 9**
ສື່ການຮຽນການສອນ ຝຶກເວົ້າພາສາລາວ

**ໂມດູນ 10**
ການແຕ່ງບົດສອນ ແລະ ການສອນຫ້ອງຄວບ

**ໂມດູນ 11**
ການນຳໃຊ້ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ

**ໂມດູນ 12**
ການນຳໃຊ້ 7 ຂັ້ນຕອນ ການຮຽນສຽງ ແລະ ຂຽນຕົວອັກສອນ ຫຼື ຄຳສັບໃນພາສາລາວ ຂັ້ນ ປ.1

**ໂມດູນ 13**
ການສອນທີ່ຄຳນຶງເຖິງ ບົດບາດຍິງ-ຊາຍ

**ໂມດູນ 14**
ການຊ່ວຍເຫຼືອເດັກທີ່ມີ ຄວາມຫຍຸ້ງຍາກໃນການຮຽນ

**ໂມດູນ 15**
ການປ່ຽນແປງດິນຟ້າອາກາດ (ກຳລັງພັດທະນາ)

ຊຸດອຸປະກອນຊ່ວຍເຫຼືອຄູ ຈະຖືກແຈກຢາຍໃຫ້ໂຮງຮຽນທຸກແຫ່ງ ແລະ ຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ຢູ່ໃນ ເມືອງເປົ້າໝາຍຂອງແຜນງານບີຄວາ.

**ທ່ານສາມາດເຂົ້າເຖິງຟາຍເອກະສານສະບັບອອນໄລຂອງຊຸດອຸປະກອນຊ່ວຍເຫຼືອຄູ ຜ່ານແພັຣດຟອມ ຫຼາຍຮູບແບບ ໂດຍການສະແກນລະຫັດ QR ຢູ່ໜ້າສຸດທ້າຍ.**

ຊຸດອຸປະກອນຊ່ວຍເຫຼືອຄູ ຈະໄດ້ສືບຕໍ່ພັດທະນາໂມດູນເພີ່ມອີກໃນໄວໆນີ້, ສະນັ້ນ ຂໍໃຫ້ກວດເບິ່ງຢ່າງເປັນປົກກະຕິ.

# ວິດີໂອ ແລະ ຟາຍສຽງ

ວິດີໂອ ແລະ ຟາຍສຽງຈຳນວນຫຼາຍໄດ້ຖືກຜະລິດຂຶ້ນ ເພື່ອໃຊ້ເຂົ້າໃນການສະໜັບສະໜູນຄູ.






**ວິດີໂອສຳລັບການພັດທະນາຄູ** ສາທິດໃຫ້ເຫັນກ່ຽວກັບວິທີການສຳຄັນ ທີ່ຖືກນຳໃຊ້ຢູ່ໃນຫຼັກສູດຊັ້ນປະຖົມສຶກສາ, ເຕັກນິກການສອນແບບໃໝ່ ແລະ ການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ທີ່ສາມາດນຳໃຊ້ເຂົ້າໃນການແກ້ໄຂສິ່ງທ້າທາຍຕ່າງໆໃນການສອນ.

ວິດີໂອດັ່ງກ່າວໄດ້ນຳໃຊ້ຕົວຢ່າງການສອນຕົວຈິງ ທີ່ຖືກຖ່າຍທຳຢູ່ໃນຫ້ອງຮຽນຕ່າງໆ ໃນປະເທດລາວ ເພື່ອສະແດງໃຫ້ເຫັນການສາທິດເຕັກນິກຕ່າງໆ. ຄູສາມາດນຳໃຊ້ວິດີໂອດັ່ງກ່າວ ເພື່ອເປັນເຄື່ອງມື ສຳລັບການຮຽນຮູ້ດ້ວຍຕົນເອງ ໃນການທົບທວນຄືນ ແລະ ປັບປຸງຄວາມເຂົ້າໃຈຂອງເຂົາເຈົ້າ ກ່ຽວກັບຮູບແບບການສອນໃໝ່ໆ, ເຕັກນິກການສອນ ທີ່ແນະນຳຢູ່ໃນຫຼັກສູດຊັ້ນປະຖົມສຶກສາ ຫຼື ເພື່ອເປັນການກະກຽມບົດສອນໃດໜຶ່ງ. ນອກຈາກນີ້, ຄູຝຶກ ແລະ ຜູ້ເຮັດວຽກສຶກສານິເທດ ຍັງສາມາດນຳໃຊ້ວິດີໂອດັ່ງກ່າວ ເພື່ອສະໜັບສະໜູນ ຫຼື ຝຶກອົບຮົມຄູໃນລະຫວ່າງກອງປະຊຸມ, ລົງໄປຢ້ຽມຢາມໂຮງຮຽນ ຫຼື ກຸ່ມໂຮງຮຽນ.



**ສາລະຄະດີຄູຕົວແບບ** ນຳສະເໜີແນວທາງປະຕິບັດທີ່ດີທີ່ສຸດ ໂດຍນັກວິຊາການດ້ານການສຶກສາຈາກເຂດຫ່າງໄກທີ່ສາມາດແກ້ໄຂສິ່ງທ້າທາຍທົ່ວໄປໄດ້ຢ່າງມີປະສິດທິພາບ. ຕອນຕ່າງໆຂອງສາລະຄະດີແມ່ນອີງໃສ່ຂໍ້ມູນຈາກການສຳພາດ ແລະ ສະໜອງຄຳແນະນຳທີ່ສາມາດປະຕິບັດໄດ້ ກ່ຽວກັບວິທີການສອນຫຼັກສູດ ຫຼື ການນຳໃຊ້ວິທີການສອນແບບຮຽນຮ່ວມ.



**ວິດີໂອປູກຈິດສຳນຶກ** ວິດີໂອເຫຼົ່ານີ້ໄດ້ກ່າວເຖິງຫົວຂໍ້ທີ່ສຳຄັນດ້ານການສຶກສາ ເຊັ່ນ: ຄວາມສະເໝີພາບຍິງ-ຊາຍໃນຫ້ອງຮຽນ, ການຮັກສາປຶ້ມແບບຮຽນ, ການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ ແລະ ວິດີໂອສົ່ງເສີມການສຶກສາ.



**ຊຸດຟາຍສຽງ** ປະກອບມີນິທານ, ດົນຕີ ແລະ ສຽງເພງ ທີ່ຄູສາມາດນຳໃຊ້ກັບນັກຮຽນໃນຫ້ອງຮຽນໄດ້ໂດຍອີງຕາມບົດຮຽນໃນແຕ່ລະບົດ.

ເພື່ອເຂົ້າເຖິງວິດີໂອ ແລະ ຟາຍສຽງຕ່າງໆ, **ກະລຸນາສະແກນລະຫັດ QR ຢູ່ໜ້າສຸດທ້າຍ** ຫຼື ຄົ້ນຫາດ້ວຍຄຳວ່າ "ວິດີໂອສຳລັບການພັດທະນາຄູ - Teacher Development Videos" ຢູ່ໃນຊ່ອງຢູທູບ.

ນອກຈາກນີ້, ວິດີໂອ ແລະ ຟາຍສຽງເຫຼົ່ານີ້ ຍັງມີຢູ່ໃນ ຢູເອສບີ (USB) ທີ່ຄູໄດ້ຮັບພ້ອມກັບປຶ້ມຄູ່ມືຄູຂອງເຂົາເຈົ້າ.

# ຈະນຳໃຊ້ວິດີໂອແນວໃດ?

ຟາຍສຽງ ແມ່ນແຫຼ່ງຂໍ້ມູນຮຽນຮູ້ທີ່ເປັນປະໂຫຍດ ທີ່ຈະຊ່ວຍເຫຼືອຄູໃນການສອນເນື້ອໃນ ແລະ ທັກສະໃໝ່ຕ່າງໆ. ຟາຍສຽງເປັນສ່ວນໜຶ່ງຂອງບົດຮຽນພາສາອັງກິດ ແລະ ພາສາລາວ ເກືອບທຸກບົດ.

ຟາຍສຽງທັງໝົດ ແມ່ນມີຢູ່ໃນ USB ທີ່ມາພ້ອມກັບປຶ້ມຄູ່ມືຄູ. ນອກຈາກນັ້ນ, ກໍຍັງມີແຜ່ນຂໍ້ມູນທີ່ແນບໄປກັບ USB ເຊິ່ງຈະມີລາຍລະອຽດທັງໝົດຂອງຟາຍຕ່າງໆທີ່ມີຢູ່ໃນ USB.

ນອກຈາກນີ້, ທ່ານຍັງສາມາດຊອກຫາຟາຍສຽງສ່ວນໃຫຍ່ທີ່ເປັນຮູບພາບເຄື່ອນໄຫວຕ່າງໆ ໄດ້ຢູ່ໃນແພລັດຟອມ ຄັງປັນຍາ (Khang Panya) ແລະ ຢູ່ໃນຊ່ອງຢູທູບ “ວິດີໂອສໍາລັບການພັດທະນາຄູ - Teacher Development Videos”.

ໃນຕອນຕົ້ນຂອງປີຮຽນ ຂໍໃຫ້ທ່ານສ້າງຄວາມຄຸ້ນເຄີຍກັບຟາຍສຽງເຫຼົ່ານີ້. ຖ້າທ່ານບໍ່ສາມາດເຂົ້າເຖິງແຫຼ່ງຂໍ້ມູນຮຽນຮູ້ເຫຼົ່ານີ້ໄດ້, ໃຫ້ປຶກສາກັບຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດພາຍໃນ ຫຼື ຜູ້ເຮັດວຽກສຶກສານິເທດຂັ້ນເມືອງ.

ໃນເວລາແຕ່ງບົດສອນທີ່ຈຳເປັນຕ້ອງໃຊ້ຟາຍສຽງ, ໃຫ້ລະບຸໄວ້ວ່າ ຈະຕ້ອງນຳໃຊ້ຟາຍສຽງອັນໃດ.

ສໍາລັບພາສາອັງກິດ, ຟາຍສຽງທີ່ທ່ານຕ້ອງໃຊ້ໃນແຕ່ລະບົດ ແມ່ນໄດ້ລະບຸໄວ້ຢູ່ໃນຂັ້ນຕອນຕ່າງໆຂອງບົດຮຽນທີ່ຢູ່ໃນປຶ້ມຄູ່ມືຄູ. ບົດຮຽນແຕ່ລະບົດ ຈະມີລາຍລະອຽດເນື້ອໃນຂອງຟາຍສຽງ ທີ່ເປັນພາສາອັງກິດ ໂດຍມີການແປເປັນພາສາລາວແລ້ວ.





ອ້າງອີງເຖິງປຶ້ມຄູ່ມືຄູຂອງລາຍວິຊາໃນຂັ້ນຮຽນຕ່າງໆສໍາລັບຂໍ້ມູນ ກ່ຽວກັບການນຳໃຊ້ຟາຍສຽງ ແລະ ວິດີໂອອື່ນໆ.

ຊອກຫາຟາຍສຽງຢູ່ໃນແພລັດຟອມຄັງປັນຍາ (Khang Panya) ຫຼື ຊ່ອງຢູທູບ ຫຼື USB ແລະ ເປີດຟັງຟາຍສຽງ ທີ່ເປັນສ່ວນໜຶ່ງຂອງບົດສອນຂອງທ່ານ. ກ່ອນຂຶ້ນຫ້ອງສອນ, ຕ້ອງຮັບປະກັນວ່າ ທ່ານໄດ້ກະກຽມ ລຳໂພງ/ໂທລະສັບມືຖື ໄວ້ໃຫ້ພ້ອມ ເພື່ອຈະເປີດຟາຍສຽງດັ່ງກ່າວໄດ້ ໃນເວລາທີ່ຕ້ອງການ.

ຖ້າຫາກທ່ານເປີດຟາຍສຽງໂດຍການນຳໃຊ້ USB, ທ່ານຕ້ອງໄດ້ປະຕິບັດຂັ້ນຕອນລຸ່ມນີ້:

1. ສຸບ USB ເຂົ້າໃສ່ຄອມພິວເຕີ
2. ເປີດເຄື່ອງ
3. ເລືອກໃຊ້ຊ່ອງທາງ “USB”
4. ເລື່ອນຫາຟາຍສຽງທີ່ທ່ານຕ້ອງການ
5. ກົດເຂົ້າເພື່ອເປີດຟາຍສຽງດັ່ງກ່າວ

# ຈະນຳໃຊ້ວິດີໂອແນວໃດ?

1

## ເລືອກວິດີໂອທີ່ຕ້ອງການຮັບຊົມ

**ເບິ່ງຫົວຂໍ້ວິດີໂອຕ່າງໆທີ່ມີໃນຊ່ອງຢູທູບ. ເລືອກວິດີໂອທີ່ທ່ານຄິດວ່າຈະຊ່ວຍໃນຂົງເຂດໃດໜຶ່ງຂອງການສອນ.**

ໃນການເລືອກເບິ່ງວິດີໂອ, ຄູຕ້ອງຄຳນຶງວ່າ:

> ຂົງເຂດການສອນໃດທີ່ທ້າທາຍທີ່ສຸດສຳລັບຄູ?
> ຄູຢາກຮຽນຮູ້ຫຍັງເພີ່ມອີກບໍ່?
> ບັນຫາໃດທີ່ຄູອາດພົບພໍ້ໃນຫ້ອງຮຽນ?

2

## ກຽມພ້ອມຮັບຊົມ

**ອ່ານເນື້ອໃນຂອງວິດີໂອ ແລະ ກະກຽມສື່ການຮຽນການສອນທີ່ກ່ຽວຂ້ອງ ທີ່ທ່ານອາດຕ້ອງການເຊັ່ນ: ປື້ມຄູ່ມືຄູ, ປື້ມແບບຮຽນ, ສື່ການສອນ ແລະ ປື້ມບັນທຶກ.**

ສິ່ງທີ່ຄວນຄຳນຶງ ກ່ອນເບິ່ງວິດີໂອ:

> ຄູຮູ້ຫຍັງແດ່ແລ້ວ ກ່ຽວກັບຫົວຂໍ້ນີ້?
> ຄູຢາກຮຽນຮູ້ຫຍັງ?

6

## ການສະທ້ອນຄືນການສອນ

**ພາຍຫຼັງຄູໄດ້ທົດລອງນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳ ໃຫ້ຄູສະທ້ອນຄືນໃນສິ່ງທີ່ຄູໄດ້ປະຕິບັດ. ເບິ່ງວິດີໂອຄືນຖ້າຄູຕ້ອງການ ແລະ ທົດລອງຫຼາຍໆຄັ້ງຈົນກວ່າຄູຈະມີຄວາມຊຳນານໃນເຕັກນິກ/ ວິທີການ/ ການເຮັດກິດຈະກຳ.**

ບາງຈຸດທີ່ຄູອາດຈະສະທ້ອນຄືນ:

> ສິ່ງໃດທີ່ຄູເຮັດໄດ້ດີ?
> ຄູໄດ້ເຮັດຫຍັງທີ່ແຕກຕ່າງຈາກການສາທິດໃນວິດີໂອບໍ່?
> ຄູສາມາດສອນຫຍັງທີ່ແຕກຕ່າງເພື່ອປັບປຸງການສອນຂອງຄູໃນຄັ້ງຕໍ່ໄປ?



3

## ຮັບຊົມວິດີໂອ

**ເບິ່ງວິດີໂອດ້ວຍຕົນເອງ ຫຼື ກັບຄູທ່ານອື່ນ, ຜູ້ອຳນວຍການ ຫຼື ຜູ້ເຮັດວຽກສຶກສານິເທດ.**

**ກົດປຸ່ມຢຸດການເບິ່ງ, ຍ້ອນຄືນເບິ່ງວິດີໂອ ແລະ ເບິ່ງວິດີໂອຄືນຫຼາຍໆຄັ້ງຕາມຄວາມຕ້ອງການ.**

ໃນຂະນະທີ່ກຳລັງເບິ່ງວິດີໂອ ໃຫ້ສັງເກດ ແລະ ບັນທຶກສິ່ງຕໍ່ໄປນີ້:

> ມີຈຸດສຳຄັນຫຍັງແດ່ ທີ່ຄູໄດ້ເຮັດໃນວິດີໂອ?

> ນັກຮຽນມີການຕອບຮັບຄືແນວໃດ? (ຖ້າມີ)

4

## ການສະທ້ອນຄືນຕໍ່ກັບວິດີໂອ

**ໃຊ້ເວລາໜ້ອຍໜຶ່ງເພື່ອທົບທວນຄືນສິ່ງທີ່ໄດ້ເບິ່ງໃນວິດີໂອ ໂດຍອີງໃສ່ສິ່ງທີ່ຄູບັນທຶກ.**

ເພື່ອເປັນແນວທາງໃຫ້ຄູສະທ້ອນຄືນສິ່ງທີ່ໄດ້ເບິ່ງໃນວິດີໂອ, ໃຫ້ຄູຄຳນຶງສິ່ງຕໍ່ໄປນີ້:

> ສິ່ງໃດທີ່ຄູໃນວິດີໂອເຮັດ ແຕກຕ່າງຈາກຄູທີ່ທ່ານໃຫ້ການສະໜັບສະໜູນເຮັດ?

> ຄູຈະນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳໃນຫ້ອງຮຽນຂອງຄູແນວໃດ?

5

## ນຳໃຊ້ສິ່ງທີ່ໄດ້ຮຽນ

**ຈັດສັນເວລາ ແລະ ບົດຮຽນ ເພື່ອທົດລອງນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳ.**

ຄຳນຶງກ່ຽວກັບຄຳຖາມລຸ່ມນີ້:

> ເມື່ອໃດຄູຈະລອງນຳໃຊ້ເຕັກນິກການສອນ/ ວິທີການ/ ການເຮັດກິດຈະກຳ?

> ຄູຢາກໃຫ້ຜູ້ເຮັດວຽກສຶກສານິເທດ/ ຜູ້ອຳນວຍການ ຫຼື ຄູທ່ານອື່ນສັງເກດການສອນຂອງຄູບໍ່?



# ຮອດເດືອນກໍລະກົດ ປີ 2026 ມີວິດີໂອ ແລະ ຟາຍສຽງໃດແດ່ແລ້ວ?



## 1. ວິດີໂອສໍາລັບການພັດທະນາຄູ

ການສາທິດ ກ່ຽວກັບເຕັກນິກການສອນ ທີ່ມີຄໍາແນະນໍາ ແລະ ການສາທິດການສອນໃນຫ້ອງຮຽນ.

### ວິຊາພາສາລາວ

ເຕັກນິກ ແລະ ສື່ການຮຽນການສອນ ສໍາລັບວິຊາພາສາລາວ

> ວິດີໂອ 3: ວິຊາພາສາລາວ ຂັ້ນ ປ.1 ເຕັກນິກ ທີ 1-3
> ວິດີໂອ 4: ວິຊາພາສາລາວ ຂັ້ນ ປ.1 ເຕັກນິກ ທີ 10-12
> ວິດີໂອ 5: ການນໍາໃຊ້ປຶ້ມອ່ານເສີມ (ພາກທີ 1)
> ວິດີໂອ 6: ການນໍາໃຊ້ປຶ້ມອ່ານເສີມ (ພາກທີ 2)
> ວິດີໂອ 7: ວິຊາພາສາລາວ ຂັ້ນ ປ.1 ເຕັກນິກ ທີ 4-5
> ວິດີໂອ 8: ວິຊາພາສາລາວ ຂັ້ນ ປ.1 ເຕັກນິກ ທີ 6-7
> ວິດີໂອ 9: ວິຊາພາສາລາວ ຂັ້ນ ປ.1 ເຕັກນິກ ທີ 8-9
> ວິດີໂອ 10: ວິຊາພາສາລາວ ຂັ້ນ ປ.1 ເຕັກນິກ ທີ 15
> ວິດີໂອ 13: ວິຊາພາສາລາວ ຂັ້ນ ປ.2 ເຕັກນິກ ທີ 13 ກ
> ວິດີໂອ 14: ວິຊາພາສາລາວ ຂັ້ນ ປ.2 ເຕັກນິກ ທີ 13 ຂ
> ວິດີໂອ 27: ສາທິດ 7 ຂັ້ນຕອນການຮຽນສຽງ ແລະ ຂຽນຕົວອັກສອນ ຫຼື ຄໍາສັບໃນພາສາລາວ ຂັ້ນ ປ.1
> ວິດີໂອ 28: ຕົວຢ່າງ 7 ຂັ້ນຕອນການຮຽນສຽງ ແລະ ຂຽນຕົວອັກສອນ ຫຼື ຄໍາສັບໃນພາສາລາວ ຂັ້ນ ປ.1





### ຄວາມຮູ້ຕໍ່ກັບລາຍວິຊາ

ເຕັກນິກ ແລະ ສື່ການຮຽນການສອນ ສໍາລັບວິຊາອື່ນໆ

> ວິດີໂອ 16: ການສອນສຽງ ວິຊາພາສາອັງກິດ ຂັ້ນ ປ.3
> ວິດີໂອ 17: ການສອນສຽງທັງໝົດ 21 ສຽງ ວິຊາພາສາອັງກິດ ຂັ້ນ ປ.3
> ວິດີໂອ 18: ສາທິດການສອນສຽງທັງ 21 ສຽງ ວິຊາພາສາອັງກິດ ຂັ້ນ ປ.4



### ການຄຸ້ມຄອງຫ້ອງຮຽນ

ຍຸດທະສາດ ແລະ ວິທີການສອນທີ່ຈະຊ່ວຍໃຫ້ທ່ານສາມາດຈັດການ ການຮຽນການສອນ ແລະ ກິດຈະກໍາຕ່າງໆກັບນັກຮຽນ

> ວິດີໂອ 1: ການຈັດການຮຽນການສອນຢູ່ນອກຫ້ອງຮຽນ
> ວິດີໂອ 24: ການຄຸ້ມຄອງຫ້ອງຮຽນ



## ການປະເມີນນັກຮຽນ

ເຕັກນິກ ແລະ ວິທີການປະເມີນນັກຮຽນຢ່າງມີປະສິດທິພາບ

- ວິດີໂອ 2: ການນຳໃຊ້ເກມການປະເມີນໂດຍໃຊ້ເກມຮູບິກ
- ວິດີໂອ 12 ພາກ ກ: ເຕັກນິກການສັງເກດເພື່ອປະເມີນຜົນການຮຽນ
- ວິດີໂອ 12 ພາກ ຂ: ເຕັກນິກການປະເມີນຜົນການຮຽນໂດຍການຕັ້ງຄຳຖາມ
- ວິດີໂອ 12 ພາກ ຄ: ການໃຫ້ຄວາມຊ່ວຍເຫຼືອໃນລະຫວ່າງ ການປະເມີນ ແລະ ພາຍຫຼັງການປະເມີນ



## ການພັດທະນາວິຊາຊີບຄູ

ກິດຈະກຳການຮຽນຮູ້ແບບເພື່ອນຊ່ວຍເພື່ອນ ແລະ ການຮຽນຮູ້ດ້ວຍຕົນເອງ ເພື່ອການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

- ວິດີໂອ 11: ການສັງເກດການສອນໃນຫ້ອງຮຽນ ແລະ ໃຫ້ຄຳເຫັນ
- ວິດີໂອ 15: ວິທີການຮຽນການສອນທີ່ເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ
- ວິດີໂອ 21: ການຈັດຕັ້ງ ແລະ ການດຳເນີນກິດຈະກຳເປັນຄູ່/ເປັນກຸ່ມ
- ວິດີໂອ 22: ການເສີມສ້າງຄວາມໝັ້ນໃຈໃນການສອນພາສາອັງກິດ
- ວິດີໂອ 23: ການສອນເປັນຄູ່





## ການສຶກສາຮຽນຮ່ວມ

ກິດຈະກຳ ແລະ ວິທີການສອນຕ່າງໆ ເພື່ອຮັບປະກັນໃຫ້ນັກຮຽນທຸກຄົນມີໂອກາດເທົ່າທຽມກັນໃນການມີສ່ວນຮ່ວມ ແລະ ການຮຽນຮູ້

- ວິດີໂອ 20: ການຊ່ວຍເຫຼືອນັກຮຽນຊົນເຜົ່າ
- ວິດີໂອ 25: ຝຶກເວົ້າພາສາລາວ
- ວິດີໂອ 26: ການສອນຫ້ອງຄວບ
- ວິດີໂອ 29: ການຊ່ວຍເຫຼືອເດັກທີ່ມີຄວາມຫຍຸ້ງຍາກໃນການຮຽນ - ເຄື່ອງມືການປະເມີນເດັກທີ່ມີຄວາມຫຍຸ້ງຍາກໃນການຮຽນ - ສຳລັບຄູ (ກຳລັງພັດທະນາ)



## ການຄຸ້ມຄອງສື່ການຮຽນການສອນ

ການນຳໃຊ້ ແລະ ການເກັບຮັກສາສື່ການຮຽນການສອນຕ່າງໆໃນຫ້ອງຮຽນ

- ວິດີໂອ 19: ການປະດິດ ແລະ ການນຳໃຊ້ບັດຄຳ ແລະ ບັດຮູບພາບ
- ວິດີໂອ 24: ການຄຸ້ມຄອງຫ້ອງຮຽນ





## 2. ສາລະຄະດີຄູຕົວແບບ

ເລື່ອງລາວຂອງຜູ້ເຮັດວຽກດ້ານການສຶກສາທີ່ດີເດັ່ນຈາກທົ່ວປະເທດລາວ.

**ຄູຕົວແບບທີ 1:**
ຂ້ອຍຮັກອາຊີບຄູ (ການຮຽນທີ່ເນັ້ນໃສ່ການປະຕິບັດຕົວຈິງ)



**ຄູຕົວແບບທີ 2:**
ການສຶກສາຮຽນຮ່ວມ



**ຄູຕົວແບບທີ 3:**
ຄວາມສຳຄັນຂອງວຽກງານສ້າງຄູ ແລະ ການສະໜັບສະໜູນຄູ



**ຄູຕົວແບບທີ 4:**
ການປະດິດສື່ການສອນຈາກວັດສະດຸໃນທ້ອງຖິ່ນ



**ຄູຕົວແບບທີ 5:**
ການສອນນັກຮຽນຊົນເຜົ່າຢູ່ເຂດຫ່າງໄກ



**ຄູຕົວແບບທີ 6:**
ຜູ້ອຳນວຍການທີ່ເປັນແບບຢ່າງໃນການບໍລິຫານຄຸ້ມຄອງໂຮງຮຽນ



**ຄູຕົວແບບທີ 7:**
ການສອນຫ້ອງຄວບ



**ຄູຕົວແບບທີ 8:**
ການສະໜັບສະໜູນຄູ - ພາລະບົດບາດຂອງຜູ້ເຮັດວຽກສຶກສານິເທດພາຍໃນ



## 3. ວິດີໂອປູກຈິດສຳນຶກ

ວິດີໂອສັ້ນ ເພື່ອສ້າງຄວາມເຂົ້າໃຈພ້ອມທັງປະຕິບັດໃນຫົວຂໍ້ທີ່ສຳຄັນດ້ານການສຶກສາ.

> ວິດີໂອການຮັກສາປຶ້ມແບບຮຽນ (4 ວິດີໂອ)

> ວິດີໂອຄວາມສະເໝີພາບຍິງ-ຊາຍໃນຫ້ອງຮຽນ

> ວິດີໂອສົ່ງເສີມການສຶກສາ (4 ວິດີໂອ)

> ວິດີໂອການປົກປ້ອງ ແລະ ຮັກສາຄວາມປອດໄພສຳລັບເດັກ







## 3. ຊຸດຟາຍສຽງ

ນິທານ, ບົດເພງ ແລະ ສຽງດົນຕີ ທີ່ຈະນຳໃຊ້ ຢູ່ໃນຫ້ອງຮຽນ ສຳລັບຫຼັກສູດຊັ້ນປະຖົມສະບັບປັບປຸງ ໃໝ່. ຟາຍສຽງທີ່ມີຢູ່ ສຳລັບວິຊາຕ່າງໆດັ່ງຕໍ່ໄປນີ້:





- ສື່ການສອນ ສຳລັບອາທິດແນະນຳເບື້ອງຕົ້ນ, ວິຊາພາສາລາວ ແລະ ສິລະປະດົນຕີ ສຳລັບຊັ້ນ ປ.1
- ວິຊາສິລະປະດົນຕີ ແລະ ພະລະສຶກສາ ສຳລັບຊັ້ນ ປ.2
- ວິຊາພາສາອັງກິດ ສຳລັບຊັ້ນ ປ.3
- ວິຊາພາສາລາວ ແລະ ພາສາອັງກິດ ສຳລັບຊັ້ນ ປ.4
- ວິຊາພາສາລາວ ແລະ ພາສາອັງກິດ ສຳລັບຊັ້ນ ປ.5
- ບົດເລື່ອງຈາກປຶ້ມແບບຮຽນພາສາລາວ ຊັ້ນ ປ.1 ແລະ ປຶ້ມແບບຮຽນຝຶກເວົ້າພາສາລາວ












ວິດີໂອ ແລະ ຟາຍສຽງໃໝ່ໆ ຈະຖືກຜະລິດຂຶ້ນ ຢ່າງເປັນປົກກະຕິ. ກະລຸນາຕິດຕາມເບິ່ງໄດ້ທີ່ຊ່ອງຢູທູບ "ວິດີໂອສຳລັບການພັດທະນາຄູ - Teacher Development Videos" ຢ່າງເປັນປົກກະຕິ ຫຼື ກົດສະໝັກເປັນສະມາຊິກ ເພື່ອຮັບຂໍ້ຄວາມແຈ້ງເຕືອນ ເມື່ອມີວິດີໂອໃໝ່ຖືກອັບໂຫຼດ.

# ປຶ້ມຄູ່ມືຄູ



ສື່ການຮຽນການສອນຫຼັກສູດຊັ້ນປະຖົມສຶກສານີ້ ຄວນຖືກນຳໃຊ້ໂດຍຄູ ເພື່ອແຕ່ງບົດສອນ ແລະ ດຳເນີນການສອນບົດຮຽນຕ່າງໆ ແລະ ສາມາດນຳໃຊ້ເປັນແຫຼ່ງຂໍ້ມູນຮຽນຮູ້ສຳລັບວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງໄດ້. ທຸກວິຊາໃນແຕ່ລະຂັ້ນຮຽນແມ່ນມີປຶ້ມຄູ່ມືຄູ ທີ່ປະກອບມີລາຍລະອຽດບົດສອນ ເພື່ອຊ່ວຍໃຫ້ຄູສາມາດເຂົ້າໃຈ ກ່ຽວກັບວິທີການປະຕິບັດກິດຈະກຳ ໄດ້ຢ່າງມີປະສິດທິພາບ. ປຶ້ມຄູ່ມືຄູ ປະກອບມີຂໍ້ມູນ ກ່ຽວກັບຮູບແບບການສອນທີ່ກ່ຽວຂ້ອງກັບລາຍວິຊາ, ການປະເມີນຜົນ, ການສອນຫ້ອງຄວບ ແລະ ຮູບແບບການສອນແບບຮຽນຮ່ວມ.

ສິ່ງສຳຄັນຄືຜູ້ອຳນວຍການໂຮງຮຽນ ຕ້ອງຮັບຮູ້ເຖິງຄວາມສຳຄັນຂອງປຶ້ມຄູ່ມືຄູ ໃນການອຳນວຍຄວາມສະດວກ ເພື່ອຊ່ວຍໃນການແຕ່ງບົດສອນ ແລະ ດຳເນີນການສອນບົດຮຽນໃນທຸກວິຊາ ແລະ ທຸກຂັ້ນຮຽນ. ຜູ້ອຳນວຍການໂຮງຮຽນຄວນເນັ້ນໃຫ້ເຫັນເຖິງຄວາມສຳຄັນຂອງປຶ້ມຄູ່ມືຄູໃນການຊ່ວຍໃຫ້ຄູສາມາດປະຕິບັດກິດຈະກຳ, ການສອນທີ່ກ່ຽວຂ້ອງກັບວິຊາ ແລະ ເຮັດການປະເມີນຜົນໄດ້ຢ່າງມີປະສິດທິພາບ. ນອກຈາກນີ້, ເຂົາເຈົ້າຍັງສາມາດສະໜອງ ຫຼື ແນະນຳໂດຍນຳໃຊ້ຄຳແນະນຳທີ່ຢູ່ໃນປຶ້ມຄູ່ມືຄູເຂົ້າໃນຂະບວນການປະຕິບັດຫຼັກສູດຂອງໂຮງຮຽນ ເພື່ອເສີມສ້າງແນວທາງການສອນ ແລະ ສະໜັບສະໜູນການພັດທະນາວິຊາຊີບຄູແບບຕໍ່ເນື່ອງຢ່າງບໍ່ຢຸດຢັ້ງ.

ຜູ້ເຮັດວຽກສຶກສານິເທດ ສາມາດນຳໃຊ້ປຶ້ມຄູ່ມືຄູ ເພື່ອເສີມຂະຫຍາຍຄວາມເຂົ້າໃຈຂອງຕົນເອງ ກ່ຽວກັບເນື້ອໃນຂອງລາຍວິຊາ ແລະ ຮູບແບບການສອນ. ນອກຈາກນີ້, ຍັງໃຫ້ການສະໜັບສະໜູນຄູ ໃຫ້ນຳໃຊ້ປຶ້ມຄູ່ມືຄູ ເພື່ອແຕ່ງບົດສອນ ແລະ ດຳເນີນການສອນນຳອີກ. ປຶ້ມຄູ່ມືຄູ ລວມທັງປຶ້ມແບບຮຽນຕ່າງໆ ແມ່ນມີຢູ່ໃນແພລັດຟອມຄັງປັນຍາລາວ.

**ກະລຸນາຈື່ໄວ້ວ່າ ປຶ້ມຄູ່ມືຄູ ວິຊາພາສາລາວ ຂັ້ນ ປ.1 ແມ່ນໄດ້ຮັບການປັບປຸງຄືນໃໝ່ ແລະ ສາມາດຊອກຫາປຶ້ມຄູ່ມືຄູທຸກວິຊາ ຢູ່ໃນຄັງປັນຍາລາວ ແລະ ສະແກນລະຫັດ QR ຢູ່ໜ້າສຸດທ້າຍ.**



# ຮ່າງບົດສອນ ແລະ ຄຳແນະນຳຕ່າງໆ

ຮ່າງບົດສອນ ສຳລັບຫ້ອງດ່ຽວ ແລະ ຫ້ອງຄວບ ທີ່ມີຄຳແນະນຳຕ່າງໆ ແມ່ນສາມາດນຳໃຊ້ ສຳລັບວຽກງານ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງໄດ້. ລາຍລະອຽດບົດສອນຫ້ອງຄວບ ແມ່ນໄດ້ຖືກພັດທະນາຂຶ້ນ ໂດຍທີມງານຫຼັກຫ້ອງຄວບຂອງວິທະຍາໄລຄູ. ຄຳແນະນຳໃນບົດສອນຈະໃຫ້ຂໍ້ມູນວ່າ ແຕ່ລະຂັ້ນຕອນຄວນຈະປະຕິບັດການສອນແບບໃດ.



**ທ່ານສາມາດເຂົ້າເບິ່ງຄຳແນະນຳຂອງບົດສອນ ແລະ ຮ່າງບົດສອນໄດ້ຢູ່ໃນຄັງຂໍ້ມູນດູ້ອບບັອກສ ແລະ ສະແກນລະຫັດ QR ຢູ່ໜ້າສຸດທ້າຍ.**

# ສື່ການຮຽນການສອນ ສຳລັບການຝຶກອົບຮົມ

ປຶ້ມຄູ່ມືຄູຝຶກ ແລະ ປຶ້ມສຳມະນາກອນ ຈາກການຝຶກອົບຮົມທັງໝົດ ໃນລະຫວ່າງການຈັດຕັ້ງປະຕິບັດຫຼັກສູດ ນັບຕັ້ງແຕ່ຂັ້ນ ປ.1 ສົກຮຽນ 2019/20 ເຖິງ ຂັ້ນ ປ.5 ສົກຮຽນ 2023/24 ແລະ ການສອນບົດຮຽນຝຶກເວົ້າພາສາລາວ ໃນປີ 2024 ແມ່ນແຫຼ່ງຂໍ້ມູນຮຽນຮູ້ທີ່ມີຄວາມສຳຄັນ ສຳລັບວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງ. ປຶ້ມຄູ່ມືຄູຝຶກ, ເອກະສານແຈກຢາຍ, ເອກະສານຊ້ອນທ້າຍ ແລະ ແຫຼ່ງຂໍ້ມູນຮຽນຮູ້ອື່ນໆ ທີ່ໄດ້ສະໜອງໃຫ້ ໃນລະຫວ່າງກອງປະຊຸມຝຶກອົບຮົມຄູນັ້ນ, ຄູສາມາດນຳໃຊ້ ເຂົ້າໃນວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງໄດ້. ເຄື່ອງມືຕ່າງໆ ປະກອບມີເຄື່ອງມືສັງເກດການສອນ, ເຄື່ອງມືສຳລັບຮອບວຽນການຮຽນຮູ້, ເຄື່ອງມືສຳລັບການສອນທີ່ສົ່ງເສີມການມີສ່ວນຮ່ວມຂອງເດັກທຸກຄົນ, ຫຼັກສູດຊັ້ນປະຖົມສຶກສາ, ແຜ່ນພັບທີ່ກ່ຽວຂ້ອງກັບວຽກງານການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແລະ ຮ່າງບົດສອນ. ຄູຕ້ອງເກັບຮັກສາແຫຼ່ງຂໍ້ມູນຮຽນຮູ້ຕ່າງໆທີ່ໄດ້ຮັບໃນລະຫວ່າງການຝຶກອົບຮົມແບບເຊິ່ງໜ້າໄວ້ ແລະ ສາມາດອ້າງອີງເຖິງ ແລະ ນຳໃຊ້ເຄື່ອງມືເຫຼົ່ານີ້ ໃນເວລາທີ່ເໝາະສົມ.



**ທ່ານສາມາດເຂົ້າເບິ່ງ ປຶ້ມຄູ່ມືຄູຝຶກ ແລະ ປຶ້ມສຳມະນາກອນ ຢູ່ໃນຄັງປັນຍາລາວ ແລະ ສະແກນລະຫັດ QR ຢູ່ໜ້າສຸດທ້າຍ.**

# ເຄື່ອງມືຊ່ວຍເຫຼືອໃນພາກຮຽນເພື່ອ ສະໜັບສະໜູນຄູ

ດ້ານລຸ່ມແມ່ນ 5 ວິທີການພ້ອມດ້ວຍເຄື່ອງມືໃນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບຜູ້ເຮັດວຽກສຶກສານິເທດ ເພື່ອນຳໃຊ້ເຂົ້າໃນການສະໜັບສະໜູນຄູ.

ວິທີການເຫຼົ່ານີ້ ຈະສົ່ງເສີມການຮ່ວມມື ແລະ ໃຫ້ການຊ່ວຍເຫຼືອກັນຢ່າງຕໍ່ເນື່ອງ, ຊ່ວຍໃຫ້ຄູສາມາດຮັບມືກັບສິ່ງທ້າທາຍ ແລະ ປັບປຸງວິທີການສອນຂອງເຂົາເຈົ້າ ດ້ວຍທາງເລືອກຕ່າງໆ ເຊັ່ນ: ການສະໜັບສະໜູນແບບທາງໄກ, ການສອນເປັນຄູ່, ຮອບວຽນຂອງການຮຽນ ແລະ ກຸ່ມຮຽນຜ່ານວັອດແອັບ ແລະ ນັກວິຊາການດ້ານການສຶກສາ ໄດ້ຮັບຄຳແນະນຳທີ່ເຂົາເຈົ້າຕ້ອງການ ເພື່ອໃຫ້ມີຄວາມກ້າວໜ້າຕະຫຼອດສົກຮຽນ.



**ຜູ້ເຮັດວຽກສຶກສານິເທດພາຍໃນຄວນໂທຫາຄູທີ່ທ່ານໃຫ້ການສະໜັບສະໜູນທຸກເດືອນ ເພື່ອແລກປ່ຽນກ່ຽວກັບສິ່ງທ້າທາຍໃນຫ້ອງຮຽນ ແລະ ວິທີການສອນ**

ການສະໜັບສະໜູນແບບທາງໄກນີ້ ຈະຊ່ວຍໃຫ້ຄູ:

> ໄດ້ຮັບການສະໜູນສະໜູນເປັນປະຈຳໃນການປະຕິບັດຫຼັກສູດສະບັບປັບປຸງໃໝ່

> ມີຄົນທີ່ສາມາດໃຫ້ຄູປຶກສາເມື່ອເຂົາເຈົ້າພົບກັບສິ່ງທ້າທາຍໃນການສອນ

**1 ການສະໜັບສະໜູນແບບທາງໄກ**

**ອື່ນໆ**

**5 ກຸ່ມຮຽນຜ່ານວັອດແອັບ**

**ຂຽນກິດຈະກຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ທີ່ທ່ານໄດ້ຝຶກ ຫຼື ຕ້ອງການທົດລອງໃຊ້ໃສ່ບ່ອນນີ້:**

________________________________________________________



**ຄູ, ຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດພາຍໃນແມ່ນຢູ່ໃນກຸ່ມວັອດແອັບທີ່ຄູສາມາດຮຽນຮູ້, ຂໍຄວາມຊ່ວຍເຫຼືອ ແລະ ຖາມຄຳຖາມ**

ໃນກຸ່ມວັອດແອັບນີ້ ຈະຊ່ວຍໃຫ້ຄູ:

> ແກ້ໄຂສິ່ງທ້າທາຍໃນການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາ

> ຖາມຄຳຖາມທີ່ເຂົາເຈົ້າມີກ່ຽວກັບຫຼັກສູດຊັ້ນປະຖົມສຶກສາ

> ແລກປ່ຽນເລື່ອງລາວທີ່ປະສົບຜົນສຳເລັດນຳເພື່ອນຮ່ວມງານຂອງເຂົາເຈົ້າ

> ຊອກຮູ້ວ່າຄູທ່ານອື່ນ ໄດ້ເຮັດຫຍັງແດ່ໃນຫ້ອງຮຽນຂອງເຂົາເຈົ້າ



**ການສັງເກດການສອນຂອງຄູໃນຫ້ອງຮຽນ**
ການສັງເກດການສອນໃນຫ້ອງຮຽນນີ້ ຈະຊ່ວຍໃຫ້ຄູ:

> ໄດ້ຮັບຄຳຄິດເຫັນໃນທາງສ້າງສັນ
> ປັບປຸງຄຸນນະພາບການສອນ
> ເນັ້ນໃສ່ຂົງເຂດສຳຄັນບ່ອນທີ່ຕ້ອງການການສະໜັບສະໜູນ
> ລະບຸວິທີການຕ່າງໆເພື່ອແກ້ໄຂບັນຫາການສອນ

**2** ການສັງເກດການສອນໃນຫ້ອງຮຽນ

**3** ການສອນເປັນຄູ່

**4** ຮອບວຽນຂອງການຮຽນ

**ການກະກຽມ ແລະ ການສອນບົດຮຽນ ໂດຍຄູສອງຄົນ**
ການສອນເປັນຄູ່ນີ້ ຈະຊ່ວຍໃຫ້ທ່ານ:



> ຄົ້ນພົບກິດຈະກຳໃໝ່ໆເພື່ອນຳໃຊ້ໃນຫ້ອງຮຽນ
> ແກ້ໄຂບັນຫາການສອນທີ່ທ້າທາຍ
> ຮຽນຮູ້ຈາກຄູທ່ານອື່ນທີ່ມາສອນຮ່ວມ
> ສັງເກດ ແລະ ສາທິດເຕັກນິກການສອນແບບໃໝ່ ແລະ ການຈັດກິດຈະກຳຕ່າງໆ
> ເປັນວິທີທີ່ດີທີ່ສຸດສຳລັບຄູຈົບໃໝ່ທີ່ຈະໄດ້ຮັບການຊ່ວຍເຫຼືອ "ໃນຂະນະທີ່ສອນ"

*ມີເຕັກນິກການສອນແບບເປັນທີມຫຼາຍເຕັກນິກ ທີ່ທ່ານສາມາດເຂົ້າເບິ່ງໄດ້ຕາມຄວາມຕ້ອງການຂອງທ່ານ.*

**ກຸ່ມຄູປະມານ 3-12 ທ່ານ ພົບປະກັນເປັນປະຈຳເພື່ອສະໜັບສະໜູນເຊິ່ງກັນ ແລະ ກັນ - ຫົວຂໍ້ການປະຊຸມແມ່ນອີງໃສ່ຄວາມຕ້ອງການການຮຽນຂອງບັນດາຄູ**
ຮອບວຽນຂອງການຮຽນນີ້ ຈະຊ່ວຍໃຫ້ຄູ:



> ສະທ້ອນຄືນການສອນຂອງເຂົາເຈົ້າ
> ແລກປ່ຽນປະສົບການການສອນທີ່ປະຕິບັດໄດ້ດີ ແລະ ສິ່ງທ້າທາຍ
> ແກ້ໄຂບັນຫາທີ່ຫຍຸ້ງຍາກຮ່ວມກັນ
> ຮຽນຮູ້ແນວຄວາມຄິດ ແລະ ເຕັກນິກການສອນໃໝ່ໆ

# ທ່ານສາມາດຊອກຫາແຫຼ່ງຂໍ້ມູນຮຽນຮູ້ຕ່າງໆ ໂດຍການສະແກນລະຫັດ QR ລຸ່ມນີ້

ວິດີໂອສຳລັບການພັດທະນາຄູ ແລະ ຊຸດຟາຍສຽງ

ແພັດຟອມຮຽນຮູ້ ສຳລັບປຶ້ມແບບຮຽນ, ປຶ້ມຄູ່ມືຄູ, ປຶ້ມຄູ່ມືຄູຝຶກ ແລະ ຂໍ້ມູນ, ວິດີໂອ ແລະ ຊຸດຟາຍສຽງ

ຄັງຂໍ້ມູນດຼ້ອບບັອກສ ສຳລັບ ຊຸດອຸປະກອນຊ່ວຍເຫຼືອຄູ, ເຄື່ອງມືໃຫ້ການຊ່ວຍເຫຼືອໃນພາກຮຽນ, ຮ່າງບົດສອນ ແລະ ຄຳແນະນຳ ສຳລັບການກະກຽມເພື່ອແຕ່ງບົດສອນ ແລະ ວິດີໂອ

ຖ້າທ່ານພົບຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງຂໍ້ມູນຮຽນຮູ້ເຫຼົ່ານີ້, ທ່ານສາມາດຂໍຄວາມຊ່ວຍເຫຼືອຈາກທາງ ຜູ້ອຳນວຍການໂຮງຮຽນ, ຜູ້ເຮັດວຽກສຶກສານິເທດພາຍໃນ ຫຼື ຜູ້ເຮັດວຽກສຶກສານິເທດຂັ້ນເມືອງ.

ອົງການ JICA ກໍໄດ້ພັດທະນາແຫຼ່ງຂໍ້ມູນຮຽນຮູ້ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບ ວິຊາຄະນິດສາດເຊິ່ງສາມາດເຂົ້າເຖິງໄດ້ທີ່ນີ້

Australian Aid

ແຜນງານບີຄວາ ແມ່ນແຜນງານທີ່ນຳພາໂດຍ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ, ໂດຍການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ

ຈັດພິມໃນເດືອນກໍລະກົດ 2026